ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສຳນັກງານປົກຄອງແຂວງຄຳມ່ວນ

ເລກທີ..08...../ຈຂ/ຄມ

ຄຳມ່ວນ, ວັນທີ [illegible] 2014

# ຄຳສັ່ງ

## ຂອງ ເຈົ້າແຂວງໆ ຄຳມ່ວນ

## ກ່ຽວກັບ ການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາ ຝຸ່ນ, ແນວພັນພືດ, ຢາຂ້າຫຍ້າ ແລະ ຢາປາບສັດຕູພືດອື່ນໆ ໃນແຂວງຄຳມ່ວນ

---

ເຖິງ: ບັນດາທ່ານເຈົ້າເມືອງ, ທ່ານຫົວໜ້າພະແນກການ, ທະຫານ, ຕຳຫລວດ, ບໍລິສັດ, ຫ້າງຮ້ານຕ່າງໆ ຊາວກະສິກອນ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າ ພາຍໃນແຂວງຄຳມ່ວນ.

- ອີງຕາມ: ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ສະບັບເລກທີ 03 /ສພຊ, ລົງວັນທີ 21 ຕຸລາ 2003.
- ອີງຕາມ: ຄຳສັ່ງ ຂອງລັດຖະມົນຕີ ກ່ຽວກັບ ການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ກວດກາຝຸ່ນ, ແນວພັນພືດ, ຢາຂ້າຫຍ້າ ແລະຢາປາບສັດຕູພືດອື່ນໆ ສະບັບເລກທີ 2592/ກປ, ລົງວັນທີ 15 ສິງຫາ 2014.
- ອີງຕາມ: ບົດບັນທຶກ ການປຶກສາຫາລື ແບ່ງຂອດຄຸ້ມຄອງຄວາມປອດໄພ ແລະ ມາດຕະຖານອາຫານ ລະຫວ່າງ ກະຊວງ ສາທາລະນະສຸກ, ກະຊວງ ກະສິກຳ ແລະ ປ່າໄມ້ ແລະ ກະຊວງ ອຸດສະຫະກຳ ແລະ ການຄ້າ ສະບັບລົງວັນທີ 06 ສິງຫາ 2014.

ໃນໄລຍະຜ່ານມາ ອຳນາດການປົກຄອງເມືອງ, ພະແນກການອ້ອມຂ້າງແຂວງ ແລະ ການຈັດຕັ້ງທຸກຂັ້ນໄດ້ໃຫ້ການຮ່ວມມືເປັນຢ່າງດີ ຕໍ່ກັບການຄຸ້ມຄອງ, ຕິດຕາມ ແລະ ກວດກາການນຳເຂົ້າປັດໄຈຮັບໃຊ້ການຜະລິດກະສິກຳ ເປັນຕົ້ນແມ່ນ: ຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ອັນໄດ້ເຮັດໃຫ້ຊາວກະສິກອນ ແລະ ຜູ້ປະກອບການ ໄດ້ຊົມໃຊ້ປັດໄຈຮັບໃຊ້ການຜະລິດທີ່ດີ ມີຄຸນນະພາບ, ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ລະບຽບກົດໝາຍ ອັນໄດ້ປະກອບສ່ວນອັນສຳຄັນເຂົ້າໃນການຍົກສະມັດຕະພາບການຜະລິດຂອງຊາວກະສິກອນໃຫ້ສູງຂຶ້ນ ສາມາດສະໜອງຜົນຜະລິດໃຫ້ທ້ອງຕະຫລາດໃນລະດູການຕ່າງໆໄດ້ຢ່າງພຽງພໍ ພ້ອມທັງສາມາດສ້າງລາຍຮັບໃຫ້ຊາວກະສິກອນ ແລະ ຜູ້ປະກອບການໄດ້ຫລາຍສົມຄວນ, ແຕ່ຄຽງຄູ່ກັນນັ້ນ ກໍຍັງມີຜູ້ປະກອບການຈຳນວນໜຶ່ງ ໄດ້ລັກລອບນຳເຂົ້າບັນດາປັດໄຈຮັບໃຊ້ການຜະລິດເຊັ່ນ: ຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ໂດຍສະເພາະ ຢາຂ້າຫຍ້າທີ່ຫ້າມນຳໃຊ້ ແຕ່ຊ້ຳພັດລັກລອບນຳເຂົ້າ, ຈຳໜ່າຍ ແລະ ນຳໃຊ້ຢ່າງຊະຊາຍ ໂດຍບໍ່ຄຳນຶງເຖິງຜົນກະທົບຕໍ່ຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ ທັງໄດ້ສ້າງພາບພົດບໍ່ດີໃຫ້ແກ່ການຊີ້ນຳ-ນຳພາທາງດ້ານເຕັກນິກວິຊາການຂອງຂະແໜງການ

ກ່ຽວຂ້ອງ.

ເພື່ອເຮັດໃຫ້ການນຳເຂົ້າ, ຄຸ້ມຄອງ, ກວດກາ ການນຳໃຊ້ ຝຸ່ນ, ແນວພັນພືດ, ຢາຂ້າຫຍ້າ ແລະ ຢາປາບສັດຕູພືດ ໃນທົ່ວແຂວງຄຳມ່ວນ ດຳເນີນໄປຢ່າງມີປະສິດທິຜົນສູງ ແລະ ສອດຄ່ອງຕາມລະບຽບການລະບຽບກົດໝາຍ.

ເຈົ້າແຂວງຄຳມ່ວນ ອອກຄຳສັ່ງ:

1. ໃຫ້ພະແນກ ກະສິກຳ ແລະ ປ່າໄມ້ແຂວງຄຳມ່ວນ ປະສານສົມທົບກັບບັນດາອຳນາດການປົກຄອງ, ອຸດສາຫະກຳ ແລະ ການຄ້າແຂວງ, ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ພາສີປະຈຳເຂດ 3, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ແລະ ພະແນກສາທາລະນະສຸກແຂວງ ເພື່ອຈັດຕັ້ງເປັນຄະນະຊີ້ນຳ ແລະ ຄະນະກຳມະການ ໃນການຕິດຕາມ, ກວດກາ ແລະ ເອົາໃຈໃສ່ໃນການຄຸ້ມຄອງກວດກາການນຳເຂົ້າ ຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ໂດຍສະເພາະຢາຂ້າຫຍ້າ ຈາກຕ່າງປະເທດ ຜ່ານດ່ານປະເພນີ ແລະ ດ່ານສາກົນ ເຂົ້າມາພາຍໃນທ້ອງຖິ່ນຂອງຕົນຢ່າງເຂັ້ມງວດ ຕາມເຕັກນິກ ແລະ ລະບຽບການ.

2. ບໍ່ອະນຸຍາດໃຫ້ ໂຄງການພັດທະນາພາກລັດ, ພາກທຸລະກິດ ແລະ ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ນຳເຂົ້າ ຝຸ່ນ, ແນວພັນພືດ, ຢາປາບສັດຕູພືດ ແລະ ຢາຂ້າຫຍ້າ ທີ່ບໍ່ໄດ້ຈົດທະບຽນຖືກຕ້ອງຕາມລະບຽບກົດໝາຍ ຂອງ ສປປ ລາວ.

3. ຫ້າມ ບໍ່ໃຫ້ຮ້ານຈຳໜ່າຍ ຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ວາງສິນຄ້າປະເພດ ຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ປະປົນກັບສິນຄ້າບໍລິໂພກ ແລະ ອຸປະໂພກອື່ນໆຢ່າງເດັດຂາດ.

4. ໃຫ້ພະແນກ ກະສິກຳ ແລະ ປ່າໄມ້ແຂວງ ແຈ້ງບັນຊີ ຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ທີ່ໄດ້ຮັບການຈົດທະບຽນອະນຸຍາດການຖືກຕ້ອງຕາມລະບຽບກົດໝາຍ ໃຫ້ເຈົ້າໜ້າທີ່ກ່ຽວຂ້ອງປະຈຳດ່ານຕ່າງໆ ແລະ ທັງເປັນຜູ້ອອກໃບຢັ້ງຢືນການນຳເຂົ້າ ແລະ ຈຳໜ່າຍ ຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ໂດຍອີງໃສ່ບັນຊີທີ່ໄດ້ຮັບການຈົດທະບຽນອະນຸຍາດການນຳກົມປູກຝັງ ຢ່າງຖືກຕ້ອງຕາມລະບຽບກົດໝາຍ ຂອງສປປ ລາວ.

5. ໃຫ້ ພະແນກ ອຸດສະຫະກຳ ແລະ ການຄ້າ, ກອງບັນຊາການປ້ອງກັນຄວາມສະຫງົບ, ພາສີປະຈຳເຂດ 3, ຮ່ວມມືໃນການຕິດຕາມ-ກວດກາ ຄວາມຖືກຕ້ອງດ້ານເອກະສານ ໃນເວລານຳເຂົ້າປັດໄຈການຜະລິດ ແລະ ທັງການນຳເຂົ້າ ຂອງບັນດາຂະແໜງການ ແລະ ຜູ້ປະກອບການ ຢູ່ບັນດາດ່ານຕ່າງໆ.

6. ໃຫ້ພະແນກ ກະສິກຳ ແລະ ປ່າໄມ້ແຂວງ ເປັນເຈົ້າການ ຕິດຕາມ, ກວດກາ, ຄຸມນະພາບ ປັດໄຈການຜະລິດ ແລະ ສຸ່ມເກັບຕົວຢ່າງ ຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ ໃນສະຖານທີ່ຈຳໜ່າຍ ແລະ ສະຖານທີ່ນຳໃຊ້ ເພື່ອໃຫ້ຊາວກະສິກອນໄດ້ນຳໃຊ້ຜະລິດຕະພັນຖືກຕ້ອງຕາມມາດຕະຖານທີ່ໄດ້ຂຶ້ນທະບຽນໄວ້.

7. ໃຫ້ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ສຸ່ມເກັບກາເອົາຕົວຢ່າງ ດິນ, ນ້ຳ ທີ່ບໍລິເວນນຳໃຊ້ຢາຂ້າຫຍ້າ ໂດຍສະເພາະໃນພື້ນທີ່ງສູງເຊັ່ນ: ນ້ຳລືນ ແລະ ນ້ຳບາດານ ເພື່ອກວດກາຫາລະດັບສານພິດຕົກຄ້າງຂອງສານເຄມີ ແລະ ຢາປາບສັດຕູພືດ.

8. ໃຫ້ພະແນກ ກະສິກຳ ແລະ ປ່າໄມ້ແຂວງ ປະສານສົມທົບກັບ ພະແນກການທີ່ກ່ຽວຂ້ອງ, ອຳນາດການປົກຄອງເມືອງ ແລະ ການຈັດຕັ້ງທຸກຂັ້ນ ເພື່ອການຄຸ້ມຄອງ, ກວດກາການບໍລິການຈຳໜ່າຍ ຝຸ່ນ, ແນວພັນພືດ ແລະ ຢາປາບສັດຕູພືດ, ຢາຂ້າຫຍ້າ ພາຍໃນທ້ອງຖິ່ນຕ່າງໆ ຮັບປະກັນໃຫ້ການນຳເຂົ້າ, ການຈຳໜ່າຍ ແລະ

ນຳໃຊ້ປັດໄຈການຜະລິດດັ່ງກ່າວດຳເນີນໄປຢ່າງຖືກຕ້ອງຕາມເຕັກນິກ ແລະ ລະບຽບກົດໝາຍ, ລວມທັງ ກວດກາ ແລະ ສະກັດກັ້ນບຸກຄົນ ແລະ ພາຫະນະທີ່ບັນທຸກຝຸ່ນ, ຢາປາບສັດຕູພືດ ແລະ ແນວພັນພືດ ທີ່ ເລາະຂາຍ ຫລື ຈຳໜ່າຍຕາມບ້ານ ແລະ ກຸ່ມບ້ານຕ່າງໆ ພາຍໃນທຸກທ້ອງຖິ່ນພາຍໃນແຂວງ.

໙. ໃຫ້ພະແນກ ກະສິກຳ ແລະ ປ່າໄມ້ແຂວງ ປະສານສົມທົບກັບ ພະແນກ ສາທາລະນະສຸກແຂວງ ( ຂະແໜງ ອາຫານ ແລະ ຢາ ) ຕິດຕາມລະດັບສານເຄມີຕົກຄ້າງໃນພືດ ແລະ ຜະລິດຕະພັນພືດສົດ ພື້ນທີ່ການຜະລິດ ແລະ ຕະຫລາດ ເພື່ອຮັບປະກັນໃຫ້ປະຊາຊົນສາມາດບໍລິໂພກພືດຜົນການກະເສດ ດ້ວຍຄວາມປອດໄພ.

10. ໃຫ້ພະແນກ ກະສິກຳ ແລະປ່າໄມ້ແຂວງ ສົມທົບກັບອຳນາດການປົກຄອງເມືອງ ແລະ ການຈັດຕັ້ງທຸກຂັ້ນ ເຜີຍແຜ່, ໃຫ້ຄວາມຮູ້ ແກ່ຊາວກະສິກອນ, ກຸ່ມຜະລິດ, ຜູ້ປະກອບການ ກ່ຽວກັບການເກັບຮັກສາ ແລະ ນຳ ໃຊ້ຝຸ່ນ, ແນວພັນພືດ, ຢາປາບສັດຕູພືດ ແລະ ຢາຂ້າຫຍ້າ ໃຫ້ຖືກຕ້ອງຕາມຫຼັກວິຊາການ.

11. ສຳລັບບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງໃດໜຶ່ງ ຫາກມີການຝ່າຝືນ ແລະ ລະເມີດຄຳສັ່ງສະບັບນີ້ ໃຫ້ ຄະນະກຳມະການທີ່ຖືກແຕ່ງຕັ້ງ ດຳເນີນການສຶກສາອົບຮົມ, ປັບໃໝ ແລະ ລົງໂທດ ແລ້ວແຕ່ກໍລະນີໜັກ ຫລື ເບົາ, ສ່ວນປັດໄຈການຜະລິດ ຫລື ສິນຄ້າທີ່ນຳເຂົ້າບໍ່ຖືກຕ້ອງ ຫລື ບໍ່ສອດຄ່ອງຕາມບັນຊີທີ່ຈົດທະບຽນວິຊາ ການ ແມ່ນໃຫ້ ອາຍັດ ຫລື ຍຶດ ເພື່ອບໍ່ໃຫ້ມີການລັກລອບເອົາໄປນຳໃຊ້.

12. ມອບໃຫ້ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ບັນດາພະແນກການ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າ ການຊີ້ນຳຂະແໜງການຂອງຕົນ ແລະ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ໃຫ້ມີຜົນສຳເລັດສູງ, ຜ່ານການຈັດຕັ້ງ ປະຕິບັດ ມີຂໍ້ສະດວກ, ຫຍຸ້ງຍາກແນວໃດ ໃຫ້ລາຍງານ ການນຳແຂວງຊາບ ຢ່າງເປັນປົກກະຕິ.

13. ຄຳສັ່ງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງໆຄຳມ່ວນ

ຄຳໃບ ດາລັດ

ບ່ອນນຳສົ່ງ:
- ເຈົ້າເມືອງ 10 ເມືອງໆລະ 01 ສະບັບ ( ເພື່ອຈັດຕັ້ງປະຕິບັດ ).
- ພະແນກ ກປ ແຂວງ 01 ສະບັບ ( ເພື່ອຈັດຕັ້ງປະຕິບັດ ).
- ພະແນກ ອຄ ແຂວງ 01 ສະບັບ ( ເພື່ອຈັດຕັ້ງປະຕິບັດ ).
- ພາສີປະຈຳເຂດ 3 01 ສະບັບ ( ເພື່ອຈັດຕັ້ງປະຕິບັດ ).
- ພະແນກ ຊສ ແຂວງ 01 ສະບັບ ( ເພື່ອຈັດຕັ້ງປະຕິບັດ ).
- ພະແນກ ສທ ແຂວງ 01 ສະບັບ ( ເພື່ອຈັດຕັ້ງປະຕິບັດ ).
- ກອງບັນຊາການ ປກສ ແຂວງ 01 ສະບັບ ( ເພື່ອຈັດຕັ້ງປະຕິບັດ ).
- ເກັບມ້ຽນ 01 ສະບັບ.